ຂ່າວ NEWS
ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ທຄຕລ ແຂ່ງຂັນຄວາມຮູ້ການນຳໃຊ້ BCEL One




ເນື່ອງໃນວັນທັນເປັນທຸລະກິດຂອງທະນາຄານການຄ້າຕ່າງປະເທດລາວມະຫາຊົນ (ທຄຕລ) ຄົບຮອບ 31 ປີ; ທຄຕລ ໄດ້ຈັດການແຂ່ງຂັນ BCEL One Super User Contest ໃນວັນທີ 1 ພະຈິກ 2020 ທີ່ ຫໍວັດທະນະທຳແຫ່ງຊາດລາວ, ນະຄອນຫຼວງວຽງຈັນ ໂດຍການເຂົ້າຮ່ວມຂອງທ່ານນາງ ລຳມອນ ສິມມະໄລວົງ ຮອງກົມຄຸ້ມຄອງລະບົບຊຳລະສະສາງ, ທະນາຄານແຫ່ງ ສປປ ລາວ; ທ່ານ ນັນທະລາດ ແກ້ວປະເສີດ ຮອງຜູ້ອຳນວຍການໃຫຍ່ ທຄຕລ, ຄະນະຜູ້ບໍລິຫານ, ພະນັກງານ ທຄຕລ, ຜູ້ເຂົ້າຮ່ວມແຂ່ງຂັນ, ກອງຊົມ-ກອງເຊຍ ແລະ ມວນຊົນເຂົ້າຮ່ວມເປັນຈຳນວນຫຼວງຫຼາຍ.

ກ່ຽວກັບ BCEL One ເປັນຜະລິດຕະພັນການບໍລິການທະນາຄານເທິງມືຖື ຫຼື Mobile Banking ຂອງ ທຄຕລ ໄດ້ເລີ່ມໃຫ້ບໍລິການນັບແຕ່ປີ 2013 ແລະ ໄດ້ມີການພັດທະນາປັບປຸງລະບົບມາແລ້ວ 3 versions ເຊິ່ງໄດ້ອຳນວຍຄວາມສະດວກສະບາຍໃຫ້ແກ່ລູກຄ້າໃນການຊຳລະສະສາງທຸລະກຳທາງດ້ານການເງິນຜ່ານແອັບ BCEL One ທີ່ມີຄວາມສະດວກ ວ່ອງໄວ ປອດໄພ ແລະ ສາມາດກວດສອບໄດ້.

ການຈັດການແຂ່ງຂັນ BCEL One Super User Contest ໃນຄັ້ງນີ້ເປັນຄັ້ງທຳອິດຊຶ່ງເປັນການສ້າງກິດຈະກຳ ໃຫ້ແກ່ລູກຄ້າຂອງ ທຄຕລ ໄດ້ມີສ່ວນຮ່ວມເຂົ້າໃນການແຂ່ງຂັນທົດສອບຄວາມຮູ້ກ່ຽວກັບການນຳໃຊ້ຜະລິດຕະພັນ BCEL One ຂອງ ທຄຕລ ເຊິ່ງເປັນຜະລິດຕະພັນທີ່ມີການພັດທະນາ ແລະ ປັບປຸງຟັງຊັນການນຳໃຊ້ຂຶ້ນມາໃໝ່ເລື້ອຍໆ ເພື່ອໃຫ້ລູກຄ້າໄດ້ເຂົ້າຮ່ວມຊີງລາງວັນ ທີ່ມູນຄ່າຫຼາຍກວ່າ 70.000.000 ກີບ ແລະ ໄດ້ເຊັນສັນຍາເປັນ Brand Ambassador ຜະລິດຕະພັນ BCEL One ຂອງ ທຄຕລ ອີກດ້ວຍ. ໂຄງການແຂ່ງຂັນດັ່ງກ່າວ ໄດ້ເລີ່ມເປີດໃຫ້ລົງທະບຽນສອບເສັງນັບແຕ່ຕົ້ນເດືອນມິຖຸນາ ຈົນເຖິງ ທ້າຍເດືອນສິງຫາ ປີ 2020 ໂດຍມີຜູ້ລົງທະບຽນສອບເສັງທັງໝົດຫຼາຍກວ່າ 12.000 ຄົນ ແລະ ໄດ້ສຳເລັດການສອບເສັງອອນລາຍຄັ້ງທີ 1 ໃນໄລຍະວັນທີ 14 ກັນຍາ 2020-ວັນທີ 11 ຕຸລາ 2020 ໂດຍແບ່ງອອກເປັນ 4 ງວດ ແລະ ສາມາດຄັດເລືອກເອົານັກສອບເສັງ 100 ຄົນທີ່ສາມາດສອບເສັງໄດ້ຄະແນນສູງ ແລະ ຮັກສາເວລາໃນການສອບເສັງໄດ້ດີ ເພື່ອສືບຕໍ່ດຳເນີນການຄັດເລືອກສອບເສັງອອນລາຍລາຍຄັ້ງທີ່ 2 ໃນວັນທີ 17 ຕຸລາ 2020 ສາມາດຄັດເລືອກເອົານັກສອບເສັງໄດ້ 20 ຄົນ ເຂົ້າສອບເສັງຮອບສຸດທ້າຍໃນວັນທີ 01 ພະຈິກ 2020 ທັງນີ້ກໍ່ເພື່ອເປັນການຂໍ່ານັບຮັບຕ້ອນວັນທັນເປັນທຸລະກິດຂອງ ທຄຕລ ຄົບຮອບ 31 ປີ.




ຜ່ານການແຂ່ງຂັນຮອບສຸດທ້າຍ ໄດ້ມີຜູ້ໂຊກດີທີ່ຊະນະການແຂ່ງຂັນ BCEL One Super User Contest ຈຳນວນ 3 ຄົນ ຊຶ່ງອັນດັບທີ 1 ໄດ້ແກ່ ທ່ານ ນາງ ຈັນທະສອນ ຈັນທະເສນ, ອາຍຸ 32 ປີ, ຈາກແຂວງ ຈຳປາສັກ; ອັນດັບທີ່ 2 ໄດ້ແກ່ທ່ານ ນາງ ແກ້ວອຸດອນ ໄຊຍະສອນ ອາຍຸ 29 ປີຈາກນະຄອນຫຼວງວຽງຈັນ ແລະ ອັນດັບທີ 3 ໄດ້ແກ່ ທ່ານ ຍຸດທະນາ ໄຊຍະວົງ ອາຍຸ 27 ປີຈາກນະຄອນຫຼວງວຽງຈັນ ແລະ ໃນກິດຈະກຳການແຂ່ງຂັນ BCEL One Super User Contest ຄັ້ງນີ້ເປັນການແຂ່ງຂັນທີ່ໄດ້ຮັບຄວາມສົນໃຈ ແລະ ການຕອບຮັບຈາກສັງຄົມເປັນຈຳນວນຫຼວງຫຼາຍ ໂດຍສະເພາະນັກສຶກສາ-ປັນຍາຊົນຈາກຂອບເຂດທົ່ວປະເທດ ເຂົ້າຮ່ວມການແຂ່ງຂັນ ແລະ ຍັງເປັນການສ້າງທັກສະໃຫ້ມວນຊົນໄດ້ມີການຮຽນຮູ້ໃນການນຳໃຊ້ເທັກໂນໂລຊີໃນຍຸກ 4.0 ນຳອີກ.

**# ຂ່າວ: ຣັດສະໝີ ດວງສັດຈະ**

**ຢູ່ເມືອງລາວ ໃຊ້ເງິນກີບລາວ ຊາດລາວກ້າວໄປ**